ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ກອງປະຊຸມວຽກງານການບັນຊີແລະການເງິນຂອງ ທະນາຄານແຫ່ງ ສປປ ລາວ ປີ 2023




ໃນຕອນເຊົ້າວັນທີ 30 ມິຖຸນາ ປີ 2023 ກົມບັນຊີແລະການເງິນ ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມວຽກງານການບັນຊີແລະການເງິນຂອງ ທະນາຄານແຫ່ງ ສປປ ລາວ ປີ 2023 ຂຶ້ນທີ່ ສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ ພາຍໃຕ້ການເປັນປະທານ ຂອງ ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການ ທຫລ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 108 ທ່ານ ຈາກບັນດາກົມກ່ຽວຂ້ອງ, ສາຂາ ທຫລ ແລະ ຫົວໜ່ວຍບັນຊີທີ່ຂຶ້ນກັບ.



ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້ແມ່ນເພື່ອ ຮັບຊາບຜົນການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນຂອງ ທຫລ ປະຈໍາປີ 2022 ແລະ ທິດທາງແຜນການສ້າງຄວາມເຂັ້ມແຂງດ້ານບັນຊີແລະການເງິນ ທຫລ ປີ 2023, ການແກ້ໄຂຂໍ້ຄົງຄ້າງ ແລະ ການແລກປ່ຽນຄໍາເຫັນໃນການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນຂອງບັນດາຫົວໜ່ວຍງົບປະມານ ແລະ ຫົວໜ່ວຍບັນຊີ ທຫລ.

ກອງປະຊຸມຄັ້ງນີ້ໄດ້ດໍາເນີນໄປເປັນເວລາ 01 ວັນ ຊຶ່ງປະກອບມີຫຼາກຫຼາຍເນື້ອໃນທີ່ສໍາຄັນ ປະກອບມີ: ສະຫຼຸບການຈັດຕັ້ງປະຕິບັດວຽກງານບັນຊີແລະການເງິນຂອງ ທຫລ ປະຈໍາປີ 2022 ແລະ ແຜນການສ້າງຄວາມເຂັ້ມແຂງດ້ານບັນຊີແລະການເງິນ ທຫລ ປີ 2023, ລາຍງານຖານະການເງິນຂອງ ທຫລ ແລະ ການຈັດຕັ້ງປະຕິບັດງົບປະມານ ປະຈໍາປີ 2022, ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຕາມມະຕິກອງປະຊຸມວຽກງານບັນຊີແລະການເງິນ ທຫລ ປີ 2022 ຜ່ານມາ, ຕາງໜ້າຫົວໜ່ວຍງົບປະມານ ແລະ ບັນຊີ ທຫລ ຂຶ້ນມີຄໍາເຫັນແລກປ່ຽນວຽກງານບັນຊີແລະການເງິນຂອງຕົນ. ພ້ອມກັນນັ້ນ, ຍັງໄດ້ລາຍງານຜົນການຈັດຝຶກອົບຮົມ ປະຈໍາປີ 2023 ໃຫ້ທີ່ປະຊຸມໄດ້ຮັບຊາບ, ລາຍງານຜົນການກວດກາບັນຊີ ແລະ ກວດນັບຊັບສົມບັດ ແລະ ການປິດສະຫຼຸບບັນຊີ ທຫລ ປີ 2022, ຕາງໜ້າ 4 ພາກສ່ວນ ຂຶ້ນລາຍງານຄວາມຄືບໜ້າການແກ້ໄຂຂໍ້ຄົງຄ້າງ ຕາມຜົນການກວດກາບັນຊີ ແລະ ກວດນັບຊັບສົມບັດ ແລະ ການປິດສະຫຼຸບບັນຊີ ທຫລ ປີ 2022 ແລະ ປຶກສາຫາລືຕໍ່ກັບການແກ້ໄຂຂໍ້ຄົງຄ້າງ ແລະ ແນວທາງສ້າງຄວາມເຂັ້ມແຂງວຽກງານບັນຊີແລະການເງິນ ຂອງທະນາຄານແຫ່ງ ສປປ ລາວ ໃນຕໍ່ໜ້າ.



ຂ່າວ-ພາບ: ກົມບັນຊີແລະການເງິນ

*ຢູ່ເມືອງລາວໃຊ້ເງິນກີບລາວ*